International Training Program (ITP)

# On-site Education of Practical Languages for Area Studies
# Report in 2012

**—Lao, National University of Laos, Lao P.D.R.(14 Jul. 2012 – 6 Oct. 2012)—**


Year of Enrollment: 2012
Graduate School of Asian and African Areas Studies
Kaori Tsujita


**On My research theme and/or Language Training**

ຂ້າພະເຈົ້າກຳລັງສຳຫຼວດກ່ຽວກັບແມ່ຍິງຊົນເຜົ່າທີ່ຍ້າຍຈາກຊົນນະບົດເຂົ້າມາຢູ່ເມືອງໃຫຍ່ເພື່ອຮຽນຕໍ່ຢູ່ສປປ ລາວ. ເພາະວ່າຂ້າພະເຈົ້າສົນໃຈກ່ຽວກັບການປ່ຽນແປງຂອງສັງຄົມ ແລະ ການດຳລົງຊີວິດຂອງພວກຊົນເຜົ່າ, ພ້ອມທັງຄວາມຮັບຮູ້ ແລະ ເຂົ້າໃຈຂອງສັງຄົມຕໍ່ເຂົາເຈົ້າ. ຂ້າພະເຈົ້າກຳລັງສົນໃຈຫົວຂໍ້ນີ້ ຍ້ອນວ່າເຂົາເຈົ້າບໍ່ຄ່ອຍມີໂອກາດທີ່ໄດ້ຮັບການສຶກສາ ຖ້າທຽບກັບຄົນຢູ່ໃນຕົວເມືອງ ແລະ ພວກຜູ້ຊາຍຊົນເຜົ່າ. ຄຳຖາມໃນການຄົ້ນຄວ້າຂອງຂ້າພະເຈົ້າແມ່ນຄືດັ່ງລຸ່ມນີ້,

1. ຄວາມເປັນມາທີ່ເຮັດໃຫ້ເຂົາເຈົ້າຍ້າຍມາຮຽນຕໍ່ ຄືແນວໃດ ?

2. ສັງຄົມມີແນວຄິດ ແລະ ເຂົ້າໃຈຄືແນວໃດຕໍ່ກັບແມ່ຍິງຊົນເຜົ່າ ?

3. ແນວຄວາມຄິດຂອງເຂົາເຈົ້າຄືແນວໃດ ?

4. ມີຜົນກະທົບຕໍ່ບ້ານເກີດຂອງເຂົາເຈົ້າຄືແນວໃດ ?

ບຸກຄົນທີ່ເປັນເປົ້າໝາຍໃນການສຳຫຼວດແມ່ນໄວໜຸ່ມຍິງຊົນເຜົ່າທີ່ຍົກຍ້າຍຈາກເຂດຊົນນະບົດ ແລະ ໄດ້ເຂົ້າຮ່ວມກິດຈະກຳຂອງອົງການຊ່ວຍເຫຼືອງຫຼ້າ (NPO) ທີ່ຊ່ວຍເຫຼືອແມ່ຍິງຊົນເຜົ່າ. ອົງການນີ້ແມ່ນອົງການທີ່ຊ່ວຍເຫຼືອ ແລະ ສົ່ງເສີມແມ່ຍິງຊົນເຜົ່າທີ່ເຂົ້າມາຢູ່ນະຄອນວຽງຈັນ. ຂ້າພະເຈົ້າຄິດວ່າອົງການນີ້ແມ່ນເໝາະສົມສຳລັບການຄົ້ນຄ້ວາຂອງຂ້າພະເຈົ້າ ເພາະວ່າ ອົງການນີ້ແມ່ນອົງການດຽວທີ່ໄດ້ຮັບການສ້າງຕັ້ງໂດຍຄົນລາວ ແລະ ສົ່ງເສີມແມ່ຍິງຊົນເຜົ່າ. ຖ້າຂ້າພະເຈົ້າເຂົ້າຮ່ວມກິດຈະກຳຂອງອົງການນຳພວກແມ່ຍິງຊົນເຜົ່ານັ້ນ ຈະເຮັດໃຫ້ຂ້າພະເຈົ້າມີໂອກາດທີ່ຢູ່ໃກ້ຊິດກັບພວກເຂົາ ແລະ ຈະມີຄວາມສະດວກຂຶ້ນໃນການສຳຫຼວດຂອງຂ້າພະເຈົ້າໃນຄັ້ງຕໍ່ໄປ.

ໃນລະດູຮ້ອນນີ້, ຂ້າພະເຈົ້າໄດ້ເຂົ້າຮ່ວມການຝຶກອົບຮົບກ່ຽວກັບພາສາລາວ ທີ່ໄດ້ຈັດຢູ່ພາກວິຊາພາສາລາວ, ຄະນະອັກສອນສາດຂອງມະຫາວິທະຍາໄລແຫ່ງຊາດລາວເປັນເວລາສິບອາທິດ ເພື່ອຮຽນພາສາລາວທີ່ມີຄວາມຈຳເປັນໃນການສຳຫຼວດຂອງຂ້າພະເຈົ້າ. ຂ້າພະເຈົ້າໄດ້ເຂົ້າຫ້ອງຮຽນເປັນສີ່ມື້ຕໍ່ອາທິດ, ມື້ລະສອງຊົ່ວໂມງ ເພື່ອຮຽນ ອັກສອນລາວ, ການອອກສຽງ, ສຽງວັນນະຍຸດ ແລະ ການສົນທະນາໃນຊີວິດປະຈຳວັນ. ໃນເວລາຂ້າພະເຈົ້າມາຮອດປະເທດລາວໃໝ່ໆນັ້ນ, ຂ້າພະເຈົ້າບໍ່ເຂົ້າໃຈພາສາລາວຈັກໜ້ອຍ. ແຕ່ດຽວນີ້, ຂ້າພະເຈົ້າສາມາດສົນທະນາກັບຄົນລາວໄດ້ໂດຍພື້ນຖານ ຍ້ອນວ່າໄດ້ຮັບການສິດສອນຈາກອາຈານທີ່ໄດ້ເອົາໃຈໃສ. ແຕ່ຂ້າພະເຈົ້າກໍຍັງບໍ່ສາມາດເຂົ້າໃຈເນື້ອໃນຂອງສົນທະນາໄດ້ໝົດ ເພາະວ່າ ຍັງຮູ້ສຶກສັບສົນກັບສຳນຽງພາສາ ແລະ ບໍ່ສາມາດຈຳແນກສຽງຂຶ້ນສຽງລົງຂອງວັນນະຍຸດໄດ້. ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຢາກສືບຕໍ່ຮຽນພາສາລາວຕື່ມເພື່ອສາມາດນຳໃຊ້ໄດ້ໃນການສຳຫຼວດຄັ້ງຕໍ່ໄປ ແລະ ສຳເລັດເປົ້າໝາຍຂອງການຄົ້ນຄວ້າຂອງຂ້າພະເຈົ້າ.